**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

ຫ້ອງການ

ເລກທີ.387....../ຫກ

ນະຄອນຫຼວງວຽງຈັນ, ວັນທີ.14.....ພຶດສະພາ 2026

# ໜັງສືແຈ້ງເຊີນປະມູນ

1. ຫ້ອງການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໃນນາມຕາງໜ້າຄະນະຮັບຜິດຊອບ ຈັດຊື້ເຄື່ອງໃຊ້ຫ້ອງການ ຂໍເຊີນ ບັນດາບໍລິສັດ ແລະ ຫ້າງຮ້ານ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈ ເຂົ້າຍື່ນຊອງປະມູນ ແຂ່ງຂັນລາຄາ ສໍາລັບການສະໜອງເຄື່ອງໃຊ້ຫ້ອງການ ປະຈໍາປີ 2026 ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ໃຫ້ມີຄວາມສະດວກ ແລະ ມີປະສິດທິພາບສູງ. ກໍານົດເວລາໃນການມອບ-ຮັບແມ່ນພາຍໃນ 30 ວັນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດ ແລະ ຫ້າງຮ້ານທີ່ມີຄຸນວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ຫ້ອງການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ຕຶກອິນຊີ) ເບີໂທຕິດຕໍ່ 020 54519593, 020 22405356 ໃນໂມງລັດຖະການ;
4. ເອກະສານປະມູນເລີ່ມຂາຍ ແຕ່ວັນທີ 14 ພຶດສະພາ 2026 ຫາ ວັນທີ 19 ມິຖຸນາ 2026 ໃນລາຄາ 500,000 ກີບ/ຊອງ. ວິທີການຊໍາລະເປັນເງິນສົດ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະນໍາໃຊ້ເຂົ້າໃນວຽກງານປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນ ເວລາ 09:00 ໂມງ ຂອງວັນທີ 19 ມິຖຸນາ 2026. ຊອງປະມູນຈະໄດ້ຮັບການເປີດໃນວັນທີ 19 ມິຖຸນາ 2026 ເວລາ 10:00 ໂມງ ທີ່ຫ້ອງປະຊຸມຊັ້ນ 02 ຕຶກສົນໄຊ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໂດຍຊອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງບໍລິສັດ ແລະ ຫ້າງຮ້ານ ທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດ ທີ່ສົ່ງຊ້າກວ່າເວລາ ທີ່ກໍານົດໄວ້ ຈະບໍ່ຮັບເອົາ ແລະ ສົ່ງຄືນ ໂດຍບໍ່ມີການເປີດ.;
6. ທຸກໆຊອງປະມູນ ຕ້ອງມີການຄໍ້າປະກັນດ້ວຍ ແຊັກ(ວີຊ່າ) ຫຼື ເງິນສົດ ຊຶ່ງມີມູນຄ່າຂອງການຄໍ້າປະກັນ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າ ທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ເພື່ອເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວ ຕາມທາງຄວນດ້ວຍ.

ຮ. **ຫົວໜ້າຫ້ອງການ**

ວຽງສະໄໝ ບຸນມະນີວອນ